ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

LFX ບໍລິສັດ ຕະຫຼາດແລກປ່ຽນ
ເງິນຕາຕ່າງປະເທດລາວ ຈຳກັດ

ເລກທີ...51...../ຕລຕ

ນະຄອນຫຼວງວຽງຈັນ, ວັນທີ 06. ມິຖຸນາ 2025

# ແຈ້ງການ

ເຖິງ: ບັນດາທະນາຄານສະມາຊິກ ຂອງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ;

ເລື່ອງ: ການປັບວົງເງິນຊື້-ຂາຍເງິນຕາສຳລັບລູກຄ້າ, ໂມງເປີດ-ປິດບໍລິການ ຂອງຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ.

- ອີງຕາມ ກົດລະບຽບຂອງບໍລິສັດຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ສະບັບເລກທີ 20/ຕລຕ ລົງວັນທີ 20 ກຸມພາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ສະບັບເລກທີ 1161/ທຫລ, ລົງວັນທີ 29 ຕຸລາ 2024;
- ອີງຕາມ ໜັງສືແຈ້ງກົມນະໂຍບາຍເງິນຕາ ກ່ຽວກັບການປັບປຸງວົງເງິນຊື້ເງິນຕາສຳລັບລູກຄ້າ, ໂມງເປີດ-ປິດບໍລິການ ແລະ ການກຳນົດວົງເງິນຂັ້ນຕໍ່າ ເລກທີ 252/ກນງ, ລົງວັນທີ 05 ມິຖຸນາ 2025.

ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ (ຕລຕ) ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອເປັນການເພີ່ມຂີດຄວາມສາມາດໃນການຕອບສະໜອງຄວາມຕ້ອງການຂອງລູກຄ້າໄດ້ຫລາຍຂຶ້ນ ເລີ່ມຈາກວັນຈັນ **ວັນທີ 10 ມິຖຸນາ 2025** ເປັນຕົ້ນໄປ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈະໄດ້ປັບວົງເງິນການຊື້-ຂາຍເງິນຕາສຳລັບລູກຄ້າ ແລະ ປັບໂມງເປີດ-ປິດບໍລິການຂອງຕະຫຼາດ ດັ່ງລຸ່ມນີ້:

1. **ວົງເງິນການຊື້-ຂາຍເງິນຕາສຳລັບລູກຄ້າ**
   - **ລູກຄ້າບຸກຄົນ:** ເພີ່ມວົງເງິນຊື້ເງິນຕາຕາງປະເທດຕໍ່ມື້ ຈາກ **1,000 ໂດລາຕໍ່ມື້** ເປັນ **2,000 ໂດລາທຽບເທົ່າຕໍ່ມື້**, ບໍ່ຈຳກັດວົງເງິນແລກປ່ຽນຕໍ່ເດືອນ ແລະ ການຂາຍເງິນຕາ ແມ່ນບໍ່ຈຳກັດວົງເງິນ;
   - **ລູກຄ້ານິຕິບຸກຄົນ:** ເພີ່ມວົງເງິນຊື້ເງິນຕາຕາງປະເທດຕໍ່ມື້ ຈາກ **50,000 ໂດລາຕໍ່ມື້** ເປັນ **75,000 ໂດລາທຽບເທົ່າຕໍ່ມື້**, ບໍ່ຈຳກັດວົງເງິນແລກປ່ຽນຕໍ່ເດືອນ ແລະ ການຂາຍເງິນຕາ ແມ່ນບໍ່ຈຳກັດວົງເງິນ.
2. **ໂມງເປີດ-ປິດບໍລິການ**

   ຂະຫຍາຍເວລາໃຫ້ບໍລິການໃນຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ຈາກ **09:00-14:00 ໂມງ** ເປັນ **09:00-15:00 ໂມງ** ຂອງ ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໂຄສະນາເຜີຍແຜ່ໃຫ້ລູກຄ້າຂອງຕົນຮັບຊາບ ຕາມສົມຄວນດ້ວຍ.

**ຜູ້ອຳນວຍການ**

ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ Lao Foreign Exchange Co., Ltd ນະຄອນຫຼວງວຽງຈັນ

**ສີສະຫວາດ ດວງສະຫວັນ**